**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການປົກຄອງ ເມືອງນາຊາຍທອງ
ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງ

ເລກທີ 619 /ຍທຂ.ນທ
ວັນທີ 29.6.2026

## ໜັງສືເຊີນເຂົ້າຮ່ວມແຂ່ງຂັນການປະມູນ

- ອີງຕາມ ຂໍ້ຕົກລົງ ຄະນະກຳມະການປົກຄອງເມືອງນາຊາຍທອງ ເລກທີ 096/ຄປມ.ນທ, ລົງວັນທີ 21 ເມສາ 2023 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງຫ້ອງການ ໂຍທາທິການແລະ ຂົນສົ່ງ ເມືອງ ນາຊາຍທອງ.
- ອີງຕາມ ແຜນການລົງທຶນຂອງລັດ ສະບັບເລກທີ 140/ກຜນອ.ນວ, ລົງວັນທີ 03 ມີນາ 2026 ໂຄງການສະເໜີໃໝ່ປີ 2026 ປະເພດ V ມູນຄ່າ 50 ຕື້ລ້ານກີບ ຂອງຄະນະກຳມະການປົກຄອງ ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ.
- ອີງຕາມ ຂໍ້ຕົກລົງສະບັບເລກທີ 159/ຄປມ.ນທ, ລົງວັນທີ 06 ພຶດສະພາ 2026 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການ ຈັດຊື້-ຈັດຈ້າງ ຕິດຕາມ, ກວດກາ ແລະ ຄຸ້ມຄອງໂຄງການກໍ່ສ້າງ, ສ້ອມແປງເສັ້ນທາງພາຍເມືອງ (ງົບປະມານ 100% ຂອງໂຄງການປົກກະຕິ) ຈຳນວນ 04 ໂຄງການ ຂອງເມືອງນາຊາຍທອງ ນະຄອນຫຼວງວຽງຈັນ.
- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງນາຊາຍທອງ ຂໍເຊີນບັນດາບໍລິສັດທີ່ມີເງື່ອນໄຂ ແລະ ຄວາມເໝາະສົມເບື້ອງຕົ້ນ ໃນການເຂົ້າຮ່ວມປະມູນ ໂຄງການກໍ່ສ້າງເສັ້ນທາງ ຊຶ່ງມີລາຍຊື່ດັ່ງນີ້:

1) **ບໍລິສັດ ທີ່ມີເງື່ອນໄຂມີໃບອະນຸຍາດຂະແໜງຂົວທາງ ແລະ ເຄຫາສະຖານ (2025,2026)**
2) **ມີໃບທະບຽນການຄ້າ**
3) **ມີໃບຊຳລະອາກອນ ປີ 2026**

**ສຳລັບບັນດາກິດຈະການທີ່ຈະປະມູນປະກອບດ້ວຍໂຄງການລະອຽດຂ້າງລຸ່ມນີ້:**

| ລ/ດ | ລາຍການໜ້າວຽກລະອຽດ | ທີ່ຕັ້ງ (ໂຄງການ) | ລວງຍາວ (ແມັດ) |
|---|---|---|---|
| **I** | **ວຽກກໍ່ສ້າງ ແລະ ປັບປຸງ ເສັ້ນທາງ** | | |
| 1.1 | ໂຄງການອະນາໄມລວງຄອງເໝືອງ N8, N12, N15.3, N15.4, MCV ຂອງໂຄງການຊົນລະປະທານນ້ຳທຸ້ມ ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ | | 11,012 |

| | | | |
|---|---|---|---|
| 1.2 | ໂຄງການ ສ້ອມແປງທາງດິນແດງ ແຕ່ທາງ 13 ເໜືອ ບ້ານ ໂພນຄໍາ ຫາ ບ້ານ ນາໝາດ, ເມືອງນາຊາຍທອງ ຫາ ບ້ານ ໄຊຈະເລີນ, ເມືອງໄຊທານີ | ບ້ານ ໂພນຄໍາ | 9,370 |
| 1.3 | ໂຄງການ ກໍ່ສ້າງເສັ້ນທາງປູຢາງທາງຮ່ອມ ບ້ານ ສີງເປືອຍໃຕ້ ຫາ ບ້ານ ເປັກ ເມືອງນາຊາຍທອງ | ບ້ານ ສີງເປືອຍໃຕ້ | 1,800 |
| 1.4 | ໂຄງການ ກໍ່ສ້າງເສັ້ນທາງປູຢາງສອງຊັ້ນ ທາງຮ່ອມ ບ້ານ ສີງເປືອຍໃຕ້ ຫາ ຫ້ວຍຫຸມ, ບ້ານ ສີງເປືອຍເໜືອ, ເມືອງນາຊາຍທອງ | ບ້ານ ສີງເປືອຍໃຕ້ | 2,700 |
| 1.5 | ໂຄງການສ້ອມແປງໂຮງຮຽນປະຖົມສົມບູນໂພນຄໍາເມືອງນາຊາຍທອງ | | |
| 1.6 | ໂຄງການສ້ອມແປງໂຮງຮຽນປະຖົມສົມບູນໜອງສະ ເມືອງນາຊາຍທອງ | | |
| 1.7 | ໂຄງການສ້ອມແປງ ແລະ ຕໍ່ເຕີມຫ້ອງການ, ຫ້ອງຮຽນ ແລະ ຫ້ອງສະມຸດ ໂຮງຮຽນ ມໍປາຍອີໄລ ເມືອງນາຊາຍທອງ. | | |

**(ລາຍລະອຽດຂອງແຕ່ລະປະເພດໜ້າວຽກຈະລະບຸຢູ່ໃນເອກະສານປະມູນ)**

1. ການປະມູນນີ້ແມ່ນອະນຸຍາດໃຫ້ທຸກບໍລິສັດທີ່ມີເງື່ອນໄຂ, ມີໃບອະນຸຍາດດໍາເນີນທຸລະກິດ ກໍ່ສ້າງ, ສ້ອມແປງຂົວທາງ, ເຄຫາສະຖານ ຖືກຕ້ອງຕາມກົດໝາຍ.
2. ບໍລິສັດທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນສອບຖາມຂໍ້ມູນເພີ່ມເຕີມໄດ້ຕາມທີ່ຢູ່ຂ້າງລຸ່ມນີ້ ໃນໂມງລັດຖະການ, ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ໂທລະສັບ: 021 632001.
3. ເອກະສານປະມູນ ສາມາດຊື້ໄດ້ທີ່ ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງນາຊາຍທອງ ຕາມໂມງລັດຖະການ, ໃນລາຄາ 2.000.000 ກີບ/ຊຸດ ໂດຍບໍ່ມີການທົດແທນຄືນ.
4. ເອກະສານປະມູນຕ້ອງສົ່ງເຖິງ ຄະນະກໍາມະການ ຈັດຊື້-ຈັດຈ້າງຂັ້ນເມືອງ ກ່ອນເວລາ 9:00 ໂມງ ຂອງວັນພຸດ ,ວັນທີ 05 ສິງຫາ 2026 ທີ່ຫ້ອງປະຊຸມ ດ້ານຫຼັງສະໂມສອນເມືອງ, ຊອງປະມູນຈະໄດ້ເປີດໃນເວລາ 9:30 ໂມງ ຂອງວັນດຽວກັນ ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າຮ່ວມການປະມູນທີ່ສົນໃຈເຂົ້າຮ່ວມນໍາ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ ຈະບໍ່ຖືກຮັບຮອງ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ.
5. ເອກະສານປະມູນ ຕ້ອງປະກອບໜັງສືຄໍ້າປະກັນການປະມູນມາພ້ອມໃນມູນຄ່າ (ບໍ່ຫລຸດ 2% ຂອງລາຄາປະມູນ) ໜັງສືຄໍ້າປະກັນການປະມູນ ຕ້ອງແມ່ນໜັງສືຄໍ້າປະກັນຂອງທະນາຄານທີ່ເຊື່ອຖືໄດ້ ແລະ ຕັ້ງຢູ່ ສປປ ລາວ ຫຼື ຈະແຈ້ງການຄໍ້າປະກັນການປະມູນດ້ວຍກຽດ ກໍໄດ້.
6. ຜູ້ສົນໃຈເຂົ້າຮ່ວມປະມູນສາມາດລົງກວດກາສະໜາມຕົວຈິງດ້ວຍຕົນເອງຕາມລາຍລະອຽດຂອງແຕ່ລະໂຄງການກອງປະຊຸມກ່ອນການປະມູນຈະໄດ້ຈັດຂຶ້ນ ໃນວັນທີ 05 ສິງຫາ 2026 ທີ່ຫ້ອງປະຊຸມ ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງນາຊາຍທອງນະຄອນຫຼວງວຽງຈັນ ເລີ່ມເວລາ 9:00 ໂມງ ເປັນຕົ້ນໄປ.

**ຫົວໜ້າຫ້ອງການ**

ຫ້ອງການ ໂຍທາທິການ ແລະຂົນສົ່ງ ເມືອງ ນາຊາຍທອງ

ສັກສົມບັດ ໄຕສຸລິຍະ